# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດທີ 11 ເມສາ 2010 (4-11-2010)

## <u>ມີເຄື່ອງມືຖືກຕ້ອງ</u>

**<u>ຂໍ້ພຣະຄັມພີໃນບົດຮຽນນີ້:</u>** 2 ໂກຣິນໂທ 2:14-17; 3:4-5, 18; 4:1-2,5-6,16-18

**<u>ຄໍາຖາມຊີວິດ:</u>** ບົດຮຽນນີ້ຈະຊ່ອຍໃຫ້ທ່ານເຂົ້າໃຈວ່າຈໍາເປັນຕ້ອງມີອັນໃດຈຶ່ງຈະເປັນຜູ້ຮັບໃຊ້ໃນຖານະເປັນຜູ້ຮັບໃຊ້ຂອງອົງພຣະຄຣິດໄດ້.

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ບົດຮຽນນີ້ໄດ້ເວົ້າເຖິງຄຸນນະວຸດທິຂອງເປັນຜູ້ຮັບໃຊ້ທີ່ດີຂອງອົງພຣະຄຣິດໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ພວກເຮົາໄດ້ຍິນເລື້ອຍໆວ່າຄຣິສະຕຽນທຸກຄົນເປັນຜູ້ຮັບໃຊ້. ແຕ່ຄວາມຈິງແທ້ແລ້ວມັນອາດບໍ່ເປັນຕາມຄວາມເຂົ້າໃຈຂອງຄົນເຮົາ. ມັນເປັນຖານຖືກຕ້ອງທີ່ຈະເວົ້າວ່າຄຣິສະຕຽນທຸກຄົນໄດ້ຖືກເອີ້ນຈາກພຣະເຈົ້າ, ມີໜ້າທີ່ຮັບຜິດຊອບ, ແລະສາມາດກາຍເປັນຜູ້ຮັບໃຊ້ໄດ້. ບົດຮຽນນີ້ສອນໃຫ້ຜູ້ທີ່ເຊື່ອເຂົ້າໃຈ ແລະໃຫ້ມີຄວາມກ້າຫານສມັກເປັນຜູ້ຮັບໃຊ້ຕາມພຣະປະສົງຂອງພຣະເຈົ້າ.

ທ່ານ ບິນລີບໍ່ເຂົ້າໃຈວ່າຕົນເອງຈະເປັນຜູ້ຮັບໃຊ້ພຣະຄຣິດໄດ້ຢ່າງໃດເພາະລາວເອງຫາກໍ່ຖືກເຂົ້າມາສຶກສາໃນຫ້ອງຂອງທ່ານ ອາໂນ. ຍ້ອນຄວາມເສັຽສະລະຢ່າງເອົາໃຈໃສ່ຂອງທ່ານ ອາໂນ ຕໍ່ພຣະເຈົ້າ ຈຶ່ງໄດ້ດຶງດູດຈິດໃຈຂອງທ່ານ ບິນລີ ເພາະລາວໄດ້ຮຽນຫລາຍໆຢ່າງເຖິງຄວາມສໍາພັນອັນດີກັບອົງພຣະຄຣິດ ໃນທີ່ສຸດກໍຢາກເປັນຜູ້ຮັບໃຊ້. ບໍ່ແມ່ນພຽງແຕ່ທ່ານ ອາໂນເທົ່ານັ້ນທີ່ນໍາພາໃຫ້ທ່ານ ບິນລີມີຄວາມຮັກແລະສັດທາຕໍ່ພຣະຄັມພີ ແຕ່ຍ້ອນທີມງານຂອງນ່ວຍປະກາດຈຶ່ງເຮັດໃຫ້ທ່ານ ບິນລີມີຄວາມຍິນດີໃນການຮັບໃຊ້ພຣະເຈົ້າແລະເພື່ອນຄົນອື່ນໆອີກ. ຍ້ອນຄວາມຮັກແລະສັດທານີ້ ທ່ານບິນລີຈຶ່ງກາຍເປັນຜູ້ຮັບໃຊ້ພຣະເຈົ້າຢ່າງມີຄຸນວຸດທິ ແລະສໍາເຣັດຜົນ.

ອາຈານໂປໂລຕ້ອງການໃຫ້ຄຣິສະຕຽນເມືອງໂກຣິນໂທເຂົ້າໃຈວ່າຜູ້ທີ່ເຊື່ອທຸກຄົນສາມາດເປັນຜູ້ຮັບໃຊ້ທີ່ດີໄດ້. ບົດຮຽນນີ້ຈະຊ່ອຍໃຫ້ທ່ານສໍາຣວດເບິ່ງວ່າມີອັນໃດທີ່ຈະຊ່ອຍໃຫ້ທ່ານກາຍເປັນຜູ້ຮັບໃຊ້ຢ່າງດີໄດ້ຄື: ເປັນໜ້າເຊື່ອຖື, ມີບຸຄລິກລັກສະນະທີ່ດີ, ແລະມີເປົ້າໝາຍ.

### 1. <u>ເປັນຄົນທີ່ເຊື່ອຖືໄດ້:</u> (2 ໂກຣິນໂທ 2:14-17; 3:4-5)

ຍ້ອນຄວາມຮັກຂອງອາຈານໂປໂລຈຶ່ງເຮັດໃຫ້ເພິ່ນຂຽນຈົດໝາຍ 1 ໂກຣິນໂທ ເພື່ອແກ້ບັນຫາຂອງການແຕກແຍກໃນຄຣິສຕະຈັກ. ແລະເພິ່ນໄປຢ້ຽມອີກຄັ້ງທີສອງ (ເປັນເຫດໃຫ້ຂຽນອີກ ແຕ່ໄດ້ເສັຽໄປ). ເວລາຕິໂຕເລົ່າວ່າພວກສອນປອມໄດ້ຕໍ່ຕ້ານອາຈານໂປໂລ ແລະການປະກາດຂອງທ່ານ. ອາຈານໂປໂລຈຶ່ງຂຽນຈົດໝາຍ 2 ໂກຣິນໂທ ເພື່ອປ້ອງກັນການເທສນາ ແລະການເປັນອັຄສາວົກຂອງເພິ່ນ.

ໃນການຂຽນນັ້ນ ອາຈານໂປໂລໄດ້**ຂອບຄຸນພຣະເຈົ້າ** ເພິ່ນໄດ້ເບິ່ງຂ້າມບັນຫາ ແລະກາຍເປັນການສັຣເສີນພຣະເຈົ້າຜູ້ເອົາ**ເຮົາເຂົ້າຮ່ວມກັບພຣະຄຣິດ.** ປໂຍກແລະຄໍາເວົ້ານີ້ແມ່ນນາຍທະຫານໂຣມໃຊ້ຍົກຍ້ອງແກ່ພວກທະຫານ

ເວລາເດີນສວນສນາມສະແດງເຖິງການມີຊັຍຊະນະ.   ອາຈານໂປໂລກໍໄດ້ຮັບຊັຍຊະນະໃນຖານະເປັນຜູ້ຮັບໃຊ້ຂອງພຣະຄຣິດຜູ້ມີຊັຍຊະນະຕໍ່ຄວາມຕາຍ.

ການເດີນສວນສນາມຂອງພວກໂຣມັນພວກເຂົາໄດ້ຈູດຢາງຫອມໃຫ້ຄົນໃນເມືອງຮູ້ ແລະໂປໂລໄດ້ໃຊ້ຫລັກການຢ່າງດຽວໃຫ້ຄຣິສະຕຽນສິ່ງ**ກິ່ນຫອມຂອງພຣະຄຣິດ**ຜູ້ຍອມເສັຽສະລະຊີວິດເພື່ອໃຫ້ຜູ້ທີ່ເຊື່ອໃນພຣະອົງມີ**ກິ່ນຫອມໃນຊີວິດ**ແທນ**ຄວາມຕາຍ.**  ກ່ອນພວກເຮົາເຂົ້າມາຮັບເອົາຄວາມພົ້ນຈາກພຣະຄຣິດ ຊີວິດຂອງພວກເຮົາເນົ່າເໝັນຕໍ່ພຣະເຈົ້າ ແລະບັດນີ້ພວກເຮົາມີກິ່ນຫອມເພາະອົງພຣະຄຣິດປະທານໃຫ້.

ພວກເຮົາເປັນຜູ້ທີ່ເຊື່ອໃນພຣະຄຣິດ, ພວກເຮົາມີກິ່ນຫອມໃນການຮູ້ຈັກກັບພຣະອົງທີ່ກຳລັງ**ຂຍາຍອອກໄປທົ່ວທຸກແຫ່ງ.**  ການສະຖິດຂອງພຣະຄຣິດໃນຊີວິດຂອງພວກເຮົານັ້ນມີຢູສອງປະເດັນ: **ກິ່ນຫອມຊຶ່ງນຳໄປສູ້ຊີວິດ**ແລະ**ກິ່ນເໝັນຊຶ່ງນຳໄປສູ່ຄວາມຕາຍ.** ອາດມີບາງຄົນຜູ້ປະຕິເສດພຣະຄຣິດເຫັນວ່າພວກເຮົາມີກິ່ນເໝັນຊຶ່ງນຳໄປສູ່ຄວາມຕາຍ ແລະອາດມີບາງຄົນເມື່ອພົບເຫັນພວກເຮົາແລ້ວກໍພົບກິ່ນຫອມຫວນຊຶ່ງນຳໄປສູ່ຊີວິດ-ຊີວິດຢ່າງຄົບບໍຣິບູນ.

ຄຳຖາມມີຢູ່ວ່າແມ່ນໃຜມີຄວາມສາມາດຮັບໃຊ້ອົງພຣະຄຣິດໄດ້?  ອາຈານໂປໂລເຫັນວ່າຕົນເອງບໍ່ມີຄວາມສາມາດອັນໃດໃນການຮັບໃຊ້, ແຕ່ຄຸນສົມບັດນັ້ນມາຈາກພຣະເຈົ້າ ເວົ້າອີກຢ່າງນຶ່ງກໍຄື ກຳລັງຂອງອາຈານໂປໂລໃນການຮັບໃຊ້ນັ້ນແມ່ນມາຈາກອົງພຣະຄຣິດ.

**ຄຸນນະວຸດທິ**

ອາຈານໂປໂລຂຽນວ່າ, “ແມ່ນໃຜມີຄຸນສົມບັດສຳລັບສິ່ງນີ້?” ຄຳວ່າຄຸນນະວຸດທິແປອອກມາຈາກພາສາກຣີກແມ່ນເໝາະສົມ, ຄຸນນະວຸດທິດີ, ຫລືມີຄວາມສາມາດຕໍ່ງານນັ້ນ.  ໃນເຣື່ອງນີ້ຄຳຖາມຂອງາຈານໂປໂລໝາຍຄວາມວ່າ: ໃຜມີຄວາມສາມາດເຮັດງານນີ້ໄດ້ດີ ໃນເຣື່ອງປະກາດຂ່າວປະເສີດຂອງພຣະຄຣິດ ຜູ້ປະທານຊີວິດໃຫ້ ແລະຜູ້ເຮັດໃຫ້ດັບສູນຕລອດໄປ?  ຄຳເວົ້ານີ້ກໍມີຢູ່ໃນປຶ້ມ ອົບພະຍົບ 4:10 ທີ່ເປັນພາສາກຣີກເອີ້ນວ່າ ເຊັບຕູເຢັນ.    ໂມເຊກ່າວຕໍ່ພຣະເຈົ້າວ່າຕົນເອງບໍ່ມີຄຸນນະວຸດທິໃນການຕໍ່ວ່າກັບກະສັດຟາໂຣ ເພື່ອຈະນຳເອົາປະຊາກອນຂອງພຣະເຈົ້າອອກຈາກປະເທດອີຢິບ.    ແມ່ນພຣະເຈົ້າເປັນຜູ້ປະທານກຳລັງ ແລະຄຸນນະວຸດທິໃຫ້ໂມເຊແລະໂປໂລເພື່ອພວກເພິ່ນຈະມີຄຸນນະວຸທິໃນການຮັບໃຊ້.

ອາຈານໂປໂລຍອມຮັບວ່າ ພວກເຮົາບໍ່ມີກຳລັງແລະຄວາມສາມາດອັນໃດໃນຕົນເອງເພື່ອການຮັບໃຊ້   ແຕ່ແມ່ນພຣະເຈົ້າເປັນຜູ້ໃຫ້ກຳລັງແລະຄວາມສາມາດຢ່າງສົມບູນຕ່າງຫາກ.

ບັກຕາໃສ່ສິ່ງທີ່ພຣະເຈົ້າໄດ້ກະທຳຜ່ານທາງຊີວິດຂອງເຮົາ ເປັນສິ່ງກົງກັນຂ້າມກັບຜູ້ປະກາດປອມໄດ້ເຮັດ ເພາະພວກເຂົາໄດ້ໃຊ້ພຣະທັມເພື່ອເອົາຜົນປໂຍດຂອງຕົນເອງ.    ບໍ່ວ່າໃນສມັຍໃດກໍເຫັນວ່າມີຄົນເຫັນແກ່ຕົວມັກໃຊ້ພຣະທັມຫລອກລວງຄົນອື່ນໆ.    ອາຈານໂປໂລໄດ້ປົກປ້ອງການເປັນຜູ້ຮັບໃຊ້ທີ່ສັດຊື່ ແລະເປັນໜ້າເຊື່ອຖືຂອງຕົນ.  ເພິ່ນກ່າວວ່າພວກເຮົາບໍ່ຄືພວກເຂົາ ພວກເຮົາເວົ້າອອກຈາກໃຈ (ບໍ່ປອມ, ສັດຊື່, ແລະດ້ວຍຄວາມຈິງ).

## 2.  <u>ມີບຸຄລິກລັກສະນະທີ່ຖືກຕ້ອງ:</u>  (2 ໂກຣິນໂທ 3:18-4:2)

ໃນທຸກວັນນີ້ຜູ້ຮັບໃຊ້ທີ່ດີຂອງອົງພຣະຄຣິດໄດ້ແບ່ງປັນຕາມຄຳສອນໃນພຣະຄັມພີໃໝ່, ພວກເຂົາມີບຸຄລິກລັກສະນະຕາມທີ່ຂຽນໄວ້ໃນປຶ້ມ 2 ໂກຣິນໂທ 3:7-18.      ຂໍ້ເຫລົ່ານີ້ອາຈານໂປໂລໄດ້ກ່າວວ່າ ຣັສມີໄດ້ສ່ອງເຂົ້າໄປໃນຜູ້ທີ່ເຊື່ອຫລາຍກວ່າໂມເຊໄດ້ຮັບໃນສມັຍກ່ອນ.  ຜູ້ທີ່ເຊື່ອທຸກໆຄົນມີຣັສມີໂດຍບໍ່ຕ້ອງບັງໄວ້ຊຶ່ງເປັນການສະທ້ອນຈາກອົງພຣະຜູ້ເປັນເຈົ້າ ເໝືອນກັບໂມເຊໄດ້ຮັບ.

ເມື່ອປຽບກັບໂມເຊແລ້ວ ຣັສມີນັ້ນຮ້ອຍລີງ (3:7,13). ແຕ່ຣັສມີທີ່ສ່ອງເຂົ້າໄປໃນຊີວິດຂອງຜູ້ທີ່ເຊື່ອໃນທຸກວັນນີ້ໄດ້ອອກມາຈາກທາງໃນຊຶ່ງໄດ້ປ່ຽນແປງໃຫ້ຢູ່ໃນສະພາບເດີມຕລອດໄປ. ຄໍາເວົ້າວ່າປ່ຽນແປງນັ້ນແມ່ນປ່ຽນເທື່ອລະນ້ອຍຕາມພຣະວິນຍານຊີງນໍາໃນຊີວິດຂອງຜູ້ທີ່ເຊື່ອ ເພື່ອໃຫ້ເປັນຄົນຊອງທັມ ໃຫ້ເປັນຄົນຖືກຊໍາຣະລ້າງ ແລະໃຫ້ມີຣັສມີ. ໃນເມື່ອຜູ້ທີ່ເຊື່ອມີຄວາມຮູ້ເຖິງເຣື່ອງຂອງພຣະຄຣິດເພີ້ມຂຶ້ນ ພຣະອົງກໍເປີດໃຫ້ຮູ້ເພີ້ມຂຶ້ນອີກໃນຊີວິດ.

ຜູ້ຮັບໃຊ້ພຣະຄຣິດຕ້ອງເຂົ້າໃຈວ່າຈະມີຫລາຍຄົນມັກຈັບເອົາຄວາມຜິດ. ພຣະເຈົ້າໄດ້ປະທານໃຫ້ອາຈານໂປໂລເປັນຜູ້ຮັບໃຊ້ **(ໃນຖານະເຮົາຮັບໃຊ້)** ພຣະຄຣິດຊູແຮງເວລາພົບກັບບັນຫາ **(ພວກເຮົາໄດ້ຮັບຄວາມເມດຕາ)**. ອາຈານໂປໂລ ອາດຂຽນວ່າ ພວກເຮົາຢ່າຍອມແພ້ ຫລືໝົດກໍາລັງໃຈໄປເວລາຄົນອື່ນຕ້ອງຕິ. ແຕ່ເຫັນວ່າເພິ່ນມີລັກສະນະທີ່ດີຈຶ່ງກ່າວວ່າຢ່າເຮັດສິ່ງທີ່ອັບອາຍໃນທີ່ລັບ ຫລືມີຊີວິດຢູ່ໃນຄວາມຫລອກລວງໂດຍໃຊ້ພຣະຄໍາຂອງພຣະເຈົ້າ. ອາຈານໂປໂລປະນາມການປະພຶດ ຫລືຫລັກການທີ່ບໍ່ສົມຄວນໃນການຮັບໃຊ້. ໃຫ້ຮູ້ວ່າຜູ້ຮັບໃຊ້ພຣະເຈົ້າໄດ້ມອບຖວາຍຕົນເອງຕໍ່ພຣະຄຣິດແລ້ວແລະຕ້ອງສະແດງຕົນເປັນຄົນທີ່ເວົ້າຄວາມຈິງທັງໝົດຕໍ່ຄົນອື່ນໆ.

### 3. <u>ມີເປົ້າໝາຍທີ່ຖືກຕ້ອງ:</u> (2 ໂກຣິນໂທ 4:5-6, 16-18)

ຜູ້ຮັບໃຊ້ພຣະເຈົ້າບໍ່ໄດ້ປະກາດຕົນເອງ ແຕ່ປະກາດອົງພຣະຄຣິດເປັນອົງພຣະຜູ້ເປັນເຈົ້າ: ອາຈານໂປໂລໄດ້ເວົ້າເຖິງພຣະຄຣິດ. ເວົ້າແຕ່ອົງພຣະຄຣິດເປັນພຣະເຈົ້າເທົ່ານັ້ນເປັນສິ່ງສໍາຄັນເພາະໃນທຸກວັນນີ້ຄົນສ່ວນຫລາຍກ່າວວ່າພຣະຄຣິດເປັນທາງອີກທາງນຶ່ງໃນຫລາຍໆທາງທີ່ຕ້ອງເລືອກ. ອາຈານໂປໂລອ້າງຕົວເປັນເປັນຂ້າທາດຂອງພຣະຢຊູ; ໃນເມື່ອພຣະເຢຊູເປັນພຣະຜູ້ເປັນເຈົ້າ, ຜູ້ທີ່ເຊື່ອນັ້ນຄວນມີຄວາມຍິນດີຮັບໃຊ້ພຣະອົງແລະຮັບໃຊ້ກັນແລະກັນ.

ພຣະເຈົ້າໄດ້ກະທໍາການໃນຊີວິດຂອງອາຈານໂປໂລເປັນເຫດຜົນທີ່ເພິ່ນໄດ້ປະກາດພຣະນາມພຣະເຢຊູ ແລະຮັບໃຊ້ໃນຄຣິສຕະຈັກ. ເພິ່ນໄດ້ອ້າງເຖິງການຊົງສ້າງຂອງພຣະເຈົ້າ ເມື່ອພຣະເຈົ້າກ່າວວ່າ ຄວາມສວ່າງໄດ້ສ່ອງເຂົ້າມາໃນຄວາມມືດ ເປັນແສງສວ່າງແຫ່ງຄວາມຮູ້ເຖິງພຣະສະງ່າຣາສີຂອງພຣະເຈົ້າໄດ້ສ່ອງເຂົ້າມາໃນຈິດໃຈຂອງມະນຸດເວລາເຂົາໄດ້ຮັບເຊື່ອ. ແສງສວ່າງນີ້ໄດ້ຍົກມາອະທິບາຍໃນຖານະທີ່ມີຄວາມຮູ້ເຣື່ອງພຣະເຈົ້າແລະຊ່ອຍຄົນທັງຫລາຍໃຫ້ພົ້ນ. ໃຫ້ເຂົ້າໃຈວ່າພຣະສະງ່າຣາສີຂອງພຣະເຈົ້າໄດ້ສ່ອງເຂົ້າມາໃນພຣະພັກຂອງອົງພຣະເຢຊູຄຣິດຕລອດເວລາ.

**ພຣະສະງ່າຣາສີຂ້າງໜ້າທີ່ພວກເຮົາຈະໄດ້ຮັບກັບອົງພຣະຄຣິດນັ້ນມີເກີນຄວາມທຸກລໍາບາກໃນໂລກນີ້.**

ການຮັບໃຊ້ບໍ່ແມ່ນຂອງງ່າຍ-ຮ່າງກາຍພາຍນອກໄດ້ຖືກທໍາລາຍໃນເມື່ອພວກເຮົາໄດ້ພົບກັບບັນຫາຂອງໂລກນີ້. ແນວໃດກໍຕາມໃນເມື່ອພວກເຮົາຮັບໃຊ້ຢ່າງມີເປົ້າໝາຍແລ້ວຄືປັກຕາໃສ່ພຣະຄຣິດ ພວກເຮົາຈະມີຄວາມຍິນດີໃນການຮັບໃຊ້. ຄວາມທຸກລໍາບາກສາມາດເຮັດໃຫ້ພວກເຮົາມີຄວາມອົດທົນເພື່ອຮັບເອົາສະງ່າຣາສີຈາກພຣະເຈົ້າ.

ສະງ່າຣາສີໃນອານາຄົດນັ້ນພວກເຮົາທຸກໆຈະໄດ້ຮັບຈາກພຣະອົງນັ້ນດີກວ່າຄວາມທຸກລໍາບາກທີ່ພວກເຮົາໄດ້ພົບໃນໂລກນີ້. ເວລາອົງພຣະວິນຍານໄດ້ປະທານກໍາລັງພາຍໃນໃຫ້ອາຈານໂປໂລ ເພິ່ນບໍ່ໄດ້ເອົາໃຈໃສ່ໃນສິ່ງເຫັນກັບຕາແຕ່ໄດ້ເອົາໃຈໃສ່ໃນສິ່ງຕາບໍ່ເຫັນ.

**ມີເປົ້າໝາຍແປວ່າ...**

- ເອົາພຣະເຈົ້າເປັນທີນຶ່ງກ່ອນທຸກສິ່ງທີ່ເຮົາເຮັດ
- ມີແຜນການສັ້ນແລະຍາວນານໄວ້
- ຄໍານວນສະພາບການໃຫ້ຖືກຕ້ອງ
- ຕອບສນອງຕາມທີ່ພຣະເຈົ້າພໍພຣະທັຍ
- ປະກາດ ແລະບອກຂ່າວດີຕໍ່ໂລກ

## ບົດຮຽນໃນຊີວິດ

ພຣະຄຣິດໄດ້ເອີ້ນເອົາຜູ້ເຊື່ອທຸກໆໃຫ້ເປັນຜູ້ຮັບໃຊ້. ກ່ອນພຣະເຢຊູໄດ້ສະເດັດຂຶ້ນໄປສວັນ ພຣະອົງໄດ້ມອບວຽກງານປະກາດນັ້ນໃຫ້ພວກສາວົກ. ການເອີ້ນເອົາຜູ້ຮັບໃຊ້ໃຫ້ເປັນພະຍານເພື່ອຄົນໃນໂລກຈະໄດ້ຍິນ ໄດ້ຮູ້ຈັກອົງພຣະເຢຊູແລະພຣະອົງກໍຈະປະທານຄວາມລອດພົ້ນແກ່ຜູ້ຮັບເອົາພຣະອົງເປັນພຣະຜູ້ຊ່ອຍ. ຄຣິສະຕຽນທຸກຄົນຄວນມີແຜນການເພື່ອໃຫ້ຕົນເອງກາຍເປັນຜູ້ຮັບໃຊ້ຢ່າງມີຄຸນນະວຸດທີທີ່ດີ: ໃຫ້ມີຊື່ສຽງດີ, ມີບຸຄລິກລັກສະນະທີ່ດີ, ແລະມີເປົ້າໝາຍຢ່າງຖືກຕ້ອງ.

ທ່ານຈະເອົາບົດຮຽນນີ້ໄປໃຊ້ໃນຊີວິດຂອງທ່ານຢ່າງໃດ?

- ຈົ່ງເຂົ້າໃຈວ່າພວກເຮົາເປັນຕົວແທນຂອງພຣະຄຣິດ ຄົນທັງຫລາຍກໍາລັງເບິ່ງຊີວິດຂອງພວກເຮົາຢູ່.
- ໃຫ້ແນ່ໃສ່ສິ່ງທີ່ພຣະເຈົ້າໄດ້ກະທໍາໃນຊີວິດຂອງພວກເຮົາ ບໍ່ແມ່ນສິ່ງເຮົາສາມາດເຮັດໄດ້ເອງ.
- ຈົ່ງໃຊ້ເວລາເຂົ້າເຝົ້າດ່ຽວກັບພຣະເຈົ້າ: ອ່ານພຣະຄັມພີ, ອ້ອນວອນ, ແລະຟັງສຽງຂອງພຣະເຈົ້າ ຍອມໃຫ້ພຣະເຈົ້າປ່ຽນແປງພວກເຮົາ.
- ຈົ່ງສັດຊື່ໃນການສໍາຣວດຕົນເອງ. ຍອມຖິ້ມສິ່ງຂັດຂວາງໃນຊີວິດ.
- ຕັດສິນໃຈເອົາພຣະເຢຊູ. ຢ່າໃຫ້ສັງຄົມຊັກຈູງເຮົາທີ່ວ່າພຣະເຢຊູບໍ່ແມ່ນພຽງຜູ້ດຽວທີ່ຊ່ອຍເຮົາໄດ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.